ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ
ຫ້ອງການໂຄງການ ປຊກ ເມືອງສະໝວ້ຍ ແລະ ຕະໂອ້ຍ, ແຂວງສາລະວັນ ເລກທີ........0042........./ປຊກ.ສໝ
ເບີໂທຕິດຕໍ່: 22772333,55758887 ສະໝ້ອຍ, ວັນທີ 19 ມີນາ 2026

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ການບໍລິການ ສຳຫຼວດກວດກູ້ລະເບີດທີ່ບໍ່ທັນແຕກ
ທີ່ມີຄວາມສ່ຽງ ຢູ່ໃນເຂດພື້ນທີ່ກໍ່ສ້າງກິດຈະກຳໂຄງລ່າງພື້ນຖານ ຂະໜາດນ້ອຍ ໃນ 16 ກິດຈະກຳ ຂອງໂຄງການ
ທີ່ເມືອງສະໝ້ອຍ ແລະ ເມືອງຕະໂອ້ຍ, ແຂວງສາລະວັນ
ສັນຍາເລກທີ: CLEAR.IDA/UXO/G-S/2026 (NC-005)

**ເຖິງ:** ບໍລິສັດ,ຜູ້ປະກອບການ,ການບໍລິການສຳຫຼວດກວດກູ້ລະເບີດທີ່ບໍ່ທັນແຕກໃນຂອບເຂດທົ່ວປະເທດ.

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິ ບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການບໍລິການ ສຳຫຼວດກວດກູ້ລະເບີດທີ່ບໍ່ທັນແຕກ ທີ່ມີຄວາມສ່ຽງ ຢູ່ໃນເຂດພື້ນທີ່ກໍ່ສ້າງກິດຈະກຳໂຄງລ່າງພື້ນຖານ ຂະໜາດນ້ອຍ ໃນ 16 ກິດຈະກຳ ຂອງໂຄງການ , ທີ່ເມືອງສະໝ້ອຍ ແລະ ເມືອງຕະໂອ້ຍ, ແຂວງສາລະວັນ. ດ້ວຍການປະມູນແບບສົມທຽບລາຄາ.
2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນສົມທຽບລາຄາ ສຳລັບການຈັດຊື້ການບໍລິການທີ່ໄດ້ລະບຸໄວ້ຂ້າງເທິງ, ໄລຍະເວລາກຳນົດໃນການສຳເລັດວຽກການບໍລິການ ແມ່ນ 30 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້ການບໍລິການດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້ການບໍລິການ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງສະເໜີລາຄາ ຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 06 ເມສາ 2026 ທີ່ຫ້ອງການໂຄງການ ປຊກ ເມືອງສະໝ້ອຍ ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ 09:00 ໂມງ, ວັນທີ 06 ເມສາ 2026 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈຕ້ອງການເຂົ້າຮ່ວມ ທີ່ຫ້ອງການໂຄງການ ປຊກ ເມືອງສະໝ້ອຍ, ເຊິ່ງຕັ້ງຢູ່ໃນຂອບເຂດຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງສະໝ້ອຍ,ແຂວງສາລະວັນ.
5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການໂຄງການ ປຊກ ເມືອງສະໝ້ອຍ ແລະ ເມືອງຕະໂອ້ຍ, ຕາມວັນ ແລະ ເວລາທາງລັດຖະການ.

**ຫົວໜ້າທີມງານໂຄງການ ປຊກ ເມືອງສະໝ້ອຍ ແລະ ຕະໂອ້ຍ**

1. ລາຍເຊັນ ແລະ ຊື່ແຈ້ງ.......................................... ກິພະຈັນ ໂພສາລີ
Kiphachan PHOSALY
2. ລາຍເຊັນ ແລະ ຊື່ແຈ້ງ..........................................
ປະຕິຍາ ຈູມມະນີວົງ
Patigna CHOUMMANIVONG